ເລກທີ: ....2398..../ສ.ອ.ນ

ນະຄອນຫຼວງວຽງຈັນ,ວັນທີ 13 ກຸມພາ 2024

# ມະຕິ
# ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
# ຄັ້ງທີ 01 ປະຈໍາປີ 2024, ວັນທີ 13 ກຸມພາ 2024

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 01/2024 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 13 ກຸມພາ 2024 ທີ່ສໍານັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍເປັນປະທານຂອງ **ທ່ານ ສົມຈິດ ອິນທະມິດ** ປະທານສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ພ້ອມດ້ວຍສະມາຊິກສະພາບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

**ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:**

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງທີ 04/2023.
2. **ມະຕິ:** ເຫັນດີນໍາບົດລາຍງານຜົນການດໍາເນີນທຸລະກິດຂອງບໍລິສັດປະຈໍາປີ 2023 ແລະ ຮ່າງບົດລາຍງານການເງິນຂອງບໍລິສັດ ປະຈໍາປີ 2023 ໂດຍແຕ່ງຕັ້ງໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນຜູ້ປະສານງານກັບຜູ້ກວດສອບພາຍນອກ ຫາກຮ່າງບົດລາຍງານການເງິນຂອງບໍລິສັດມີການປ່ຽນແປງໃນສ່ວນທີ່ເປັນສາລະສໍາຄັນແມ່ນໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນຜູ້ແຈ້ງໃຫ້ສະພາບໍລິຫານຮັບຊາບອີກເທື່ອໜຶ່ງ ແຕ່ຫາກມີການແກ້ພຽງເລັກໜ້ອຍ ທີ່ບໍ່ເຮັດໃຫ້ບົດລາຍງານການເງິນມີການປ່ຽນແປງໃນສາລະສໍາຄັນ ໃຫ້ຖືວ່າຮ່າງບົດລາຍງານການເງິນສະບັບດັ່ງກ່າວເປັນບົດລາຍງານການເງິນຂອງບໍລິສັດ ປະຈໍາປີ 2023 ທີ່ຈະສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງຕໍ່ໄປ.
3. **ມະຕິ:** ເຫັນດີນໍາແຜນການດໍາເນີນທຸລະກິດຂອງບໍລິສັດປະຈໍາປີ 2024 ແລະ ໃຫ້ນໍາແຜນການດໍາເນີນທຸລະກິດຂອງບໍລິສັດປະຈໍາປີ 2024 ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2023 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ໄປ.
4. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດໍາເນີນທຸລະກິດຂອງບໍລິສັດ ປະຈໍາປີ 2023 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເຊິ່ງມື້ດັ່ງກ່າວຈະໄດ້ກໍານົດຕໍ່ໄປໃນ **ວາລະທີ 10** ໃນອັດຕາ **40,71** ສ່ວນຮ້ອຍຂອງກໍາໄລສຸດທິພາຍຫຼັງຫັກຄັງສໍາຮອງຕາມກົດໝາຍ ແລະ ຄັງສໍາຮອງສະສົມອື່ນໆ ຕາມນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດ, ໃນອັດຕາ **120** ກີບຕໍ່ຮຸ້ນ, ເປັນຈໍານວນເງິນປັນຜົນທັງໝົດ **19.800.000.000** ກີບ ໂດຍກໍານົດວັນຈ່າຍເງິນປັນຜົນແມ່ນ 6 ພຶດສະພາ 2024.

5. **<u>ມະຕິ:</u>** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ **ບໍລິສັດ ເອີນ ແອນ ຢັງ (ລາວ) ຈຳກັດ** ( **Ernst & Young Lao Co., Ltd** ) ເປັນຜູ້ກວດສອບບັນຊີພາຍນອກຂອງ ບໍລິສັດ ປະຈຳປີ 2024 ໂດຍມີຄ່າບໍລິການເປັນເງິນຈຳນວນເງິນ ບໍ່ກາຍ **560.740.000 ກີບ (27.000 ໂດລາສະຫະລັດ).**

6. **<u>ມະຕິ:</u>** ເຫັນດີໃຫ້ສະເໜີແກ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາ ແລະ ອະນຸມັດ ປັບເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງບໍລິສັດ ເພື່ອໃຫ້ສອດຄ່ອງກັບສະພາວະຕະຫຼາດ ຈາກເດີມດັ່ງນີ້:

   1. ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ສະເພາະຜູ້ທີ່ເປັນສະມາຊິກອິດສະຫຼະເທົ່ານັ້ນ
      - ປະທານສະພາບໍລິຫານ 10.000.000 ກີບ ຕໍ່ 1 ຄັ້ງ;
      - ຮອງປະທານສະພາບໍລິຫານ 6.600.000 ກີບ ຕໍ່ 1 ຄັ້ງ; ແລະ
      - ສະມາຊິກສະພາບໍລິຫານ 6.600.000 ກີບ ຕໍ່ 1 ຄັ້ງ.
   2. ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ຂອງສະມາຊິກສະພາບໍລິຫານ ຂອງບໍລິສັດ ທີ່ບໍ່ແມ່ນສະມາຊິກອິດສະຫຼະ
      - ສະມາຊິກສະພາບໍລິຫານ 4.400.000 ກີບ ຕໍ່ 1 ຄັ້ງ.

7. **<u>ມະຕິ:</u>** ເຫັນດີນາການປັບປຸງກົດລະບຽບ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແລະ ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ໄປ.

8. **<u>ມະຕິ:</u>** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ອະນຸມັດໃຫ້ມີການເພີ່ມຈຳນວນສາຂາໃໝ່ເຂົ້າໃນໃບທະບຽນວິສາຫະກິດຂອງບໍລິສັດ ແລະ ມອບສິດໃຫ້ຄະນະຜູ້ອຳນວຍການລວມເຖິງການມອບສິດໃຫ້ຜູ້ອື່ນດຳເນີນວຽກງານດັ່ງກ່າວທີ່ກ່ຽວຂ້ອງໃຫ້ສຳເລັດ.

9. **<u>ມະຕິ:</u>** ເຫັນດີໃຫ້ມີການຮຽກປະຊຸມສາມັນຜູ້ຖືຮຸ້ນ ໃນວັນທີ **08 ເມສາ 2024** ເວລາ **14:00** ໂມງ ຢູ່ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ໂດຍມີວາລະເພື່ອພິຈາລະນາ ດັ່ງຕໍ່ໄປນີ້:
   1. ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022;
   2. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2023 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2023;
   3. ພິຈາລະນາ ແລະ ຮັບຮອງແຜນການດາເນີນທຸລະກິດຂອງບໍລິສັດປະຈຳປີ 2024;
   4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດາເນີນທຸລະກິດ ປະຈຳປີ 2023;
   5. ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2024;
   6. ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ;

7. ພິຈາລະນາ ແລະ ອະນຸມັດປັບເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງບໍລິສັດ;
8. ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ;
9. ພິຈາລະນາ ແລະ ອະນຸມັດໃຫ້ມີການເພີ່ມຈຳນວນສາຂາໃໝ່ເຂົ້າໃນໃບທະບຽນວິສາຫະກິດຂອງບໍລິສັດ;
10. ເລື່ອງອື່ນໆ (ຖ້າມີ).

10. **ມະຕິ**: ເຫັນດີໃຫ້ກຳນົດເອົາວັນທີ **27 ກຸມພາ 2024** ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ແລະ ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023.

11. **ມະຕິ**: ເຫັນດີໃຫ້ແຕ່ງຕັ້ງ **ທ່ານ ແຊ ເພັງວົງສາ** ແລະ **ທ່ານ ບຸນຖົມ ຟອງວິລາດ** ໃຫ້ເປັນຜູ້ຕາງໜ້າບໍລິສັດຈົດທະບຽນ ເຊິ່ງມີຄວາມຮູ້ທາງດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າໃນຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ໃນສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນລາຍຍ່ອຍ ທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນມື້ດັ່ງກ່າວ ເຊິ່ງເປັນຜູ້ຖືຮຸ້ນລາຍຍ່ອຍຄືຖືຮຸ້ນບໍ່ເກີນ 5 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຈົດທະບຽນ ແລະ ຊຳລະແລ້ວທັງໝົດ ແລະ ເປັນຜູ້ທີ່ມີຄຸນນະສົມບັດຕາມລາຍລະອຽດທີ່ກ່າວມາຂ້າງເທິງ.

ກອງປະຊຸມໄດ້ປິດລົງເວລາ 16:00 ໂມງ ຂອງວັນດຽວກັນ.

**ປະທານສະພາບໍລິຫານ**
**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

ອຸດສາຫະກຳ ແລະ ການຄ້າ ກະຊວງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY ນະຄອນຫຼວງວຽງຈັນ

**ທ່ານ ສົມຈິດ ອິນທະມິດ**